# ບົດແນະນຳ

## (ສະບັບສຸດທ້າຍ ໃຊ້ປ່ຽນແທນສະບັບເດືອນກໍລະກົດ)

# ກ່ຽວກັບການກະກຽມ ກອງປະຊຸມໂຕະມົນ ປະຈຳປີ 2017

# (2017 RTIM)

ກະກຽມໂດຍ: ກົມຮ່ວມມືສາກົນ,
ກະຊວງ ແຜນການ ແລະ ການລົງທຶນ

ຕຸລາ 2017

# ສາລະບານ


I. ພາກສະເໜີ - ຂະບວນການໂຕະມົນແຕ່ປີ 2016 ມາຮອດປະຈຸບັນ .......... 1

II. ຈຸດປະສົງ ແລະ ຫົວຂໍ້ຂອງກອງປະຊຸມໂຕະມົນປະຈຳປີ 2017 .......... 2

2.1 ຈຸດປະສົງ .......... 2

2.2 ຫົວຂໍ້ຂອງກອງປະຊຸມໂຕະມົນປະຈຳປີ 2017 .......... 3

2.3 ປະເດັນຈຸດສຸມສະເພາະ ສຳລັບ ການປຶກສາຫາລື: .......... 3

III. ບົດສະເໜີ ແລະ ການປຶກສາຫາລືເພື່ອກະກຽມໃສ່ກອງປະຊຸມໂຕະມົນ .......... 3

3.1 ບົດສະເໜີ .......... 3

3.2 ເອກະສານພື້ນຖານຮັບໃຊ້ກອງປະຊຸມໂຕະມົນ .......... 4

3.3 ການປຶກສາຫາລື ເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ 2017 .......... 4

3.4 ການສົນທະນາ, ປຶກສາຫາລື ແລະ ປະສານງານ ຢູ່ຂັ້ນຂະແໜງການ .......... 6

3.4.1 ແຜນວຽກທີ່ເລັ່ງໃສ່ໝາກຜົນ .......... 6

3.4.2 ຂອບໜ້າວຽກສະບັບປັບປຸງ .......... 6

3.4.3 ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງຂະແໜງການ ທີ່ເລັ່ງໃສ່ໝາກຜົນເປັນຫຼັກ .......... 7

3.4.4 ແຜນການຈັດກິດຈະກຳຕ່າງໆ .......... 7

3.4.5 ການຈັດກອງປະຊຸມລະດັບຕ່າງໆ ຂອງໜ່ວຍງານຂະແໜງການ ແລະ ປະເດັນສຳຄັນ ທີ່ຈະນຳໄປປຶກສາຫາລືກັນ ໃນກອງປະຊຸມໂຕະມົນປະຈຳປີ 2017 .......... 7

3.4.6 ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ພົບປະກັບ ກອງເລຂາຂອງບັນດາໜ່ວຍງານຂະແໜງການ .......... 8

3.4.7 ກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ .......... 8

3.4.8 ງານວາງສະແດງ ຜົນສຳເລັດ ຂອງວຽກງານການຮ່ວມມືເພື່ອການພັດທະນາ .......... 8

IV. ຮູບແບບ ແລະ ວາລະກອງປະຊຸມໂຕະມົນປະຈຳປີ 2017 .......... 9

4.1 ຮູບແບບ ຂອງກອງປະຊຸມໂຕະມົນປະຈຳປີ 2017 .......... 9

4.2 ການເຂົ້າຢ້ຽມຂໍ່ານັບ ທ່ານ ນາຍົກລັດຖະມົນຕີ ເພື່ອລາຍງານຜົນຂອງກອງປະຊຸມໂດຍສັງເຂບ (ວັນເວລາຈະໄດ້ແຈ້ງໃຫ້ຊາບຕາມພາຍຫຼັງ) .......... 10

V. ບັນດາກິດຈະກຳ ແລະ ກອງປະຊຸມປຶກສາຫາລືຕ່າງໆທີ່ສຳຄັນ ເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ 2017 .......... 10

5.1 ແຜນວຽກ ແລະ ກຳນົດເວລາ .......... 10

5.2 ຈຸດປະສານງານພາຍໃນທີມຮ່ວມມືສາກົນ (ກະຊວງແຜນການ ແລະ ການລົງທຶນ) .......... 11

ເອກະສານຊ້ອນທ້າຍ 1 – ແບບຟອມການລາຍງານຂອງໜ່ວຍງານຂະແໜງການ .......... 14

# I. ພາກສະເໜີ - ຂະບວນການໂຕະມົນແຕ່ປີ 2016 ມາຮອດປະຈຸບັນ

ການຮ່ວມມືເພື່ອການພັດທະນາຢູ່ໃນ ສປປ ລາວ ແມ່ນມີວິວັດທະນາການກ້າວໄປສູ່ເພີ່ມທະວີການເປັນຄູ່ຮ່ວມໃຫ້ມີຄວາມຫຼາກຫຼາຍຂຶ້ນ ເຊິ່ງເປັນປັດໃຈສຳຄັນໃນການບັນລຸບັນດາເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs). ໄດ້ມີການເປີດກວ້າງໃຫ້ທຸກພາກສ່ວນມີສ່ວນຮ່ວມ ໃນຂະບວນການສົນທະນາ ແລະ ປຶກສາຫາລື ໃນລະດັບນະໂຍບາຍ ທີ່ລັດຖະບານເປັນເຈົ້າການ (ເຊັ່ນ ກອງປະຊຸມໂຕະມົນ ແລະ ກອງປະຊຸມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ) ເຊິ່ງປະກອບດ້ວຍຜູ້ເຂົ້າຮ່ວມຈາກ ກະຊວງຂະແໜງການ ຂັ້ນສູນກາງ, ບັນດາຄູ່ຮ່ວມພັດທະນາທີ່ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ, ສະມາຊິກສະພາແຫ່ງຊາດ, ອຳນາດການປົກຄອງທ້ອງຖິ່ນ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ, ຄູ່ຮ່ວມມືແບບໃຕ້-ໃຕ້/ຄູ່ຮ່ວມພັດທະນາລະດັບພາກພື້ນ. ສປປ ລາວ ຮ່ວມກັບບັນດາຄູ່ຮ່ວມພັດທະນາ ໄດ້ກຳນົດແຜນກິດຈະກຳຕົ້ນຕໍໃນ 14 ຂົງເຂດ ເພື່ອເພີ່ມທະວີປະສິດທິຜົນຂອງການພັດທະນາ ຕາມທີ່ໄດ້ກຳນົດໄວ້ໃນແຜນການດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ (2016-2025).

ຂະບວນການໂຕະມົນໄດ້ຖືກທົບທວນໃນກາງປີ 2016 ໂດຍອີງຕາມສະພາບການປ່ຽນແປງຕ່າງໆທີ່ເກີດຂຶ້ນຢູ່ພາຍໃນປະເທດ. ຜົນການທົບທວນດັ່ງກ່າວ ໄດ້ຊີ້ໃຫ້ເຫັນເຖິງທັດສະນະຂອງທຸກພາກສ່ວນທີ່ກ່ຽວຂ້ອງວ່າ ຂະບວນການໂຕະມົນ ເປັນເວທີສົນທະນາປຶກສາຫາລື, ແລກປ່ຽນຂໍ້ມູນຂ່າວສານ ແລະ ສ້າງເຄືອຂ່າຍສາຍພົວພັນເຊິ່ງກັນແລະກັນ ທີ່ມີຄວາມສຳຄັນ ແລະມີປະໂຫຍດຫຼາຍລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ. ແຕ່ເຖິງແນວໃດກໍ່ຕາມ, ຂະບວນການດັ່ງກ່າວ ຍັງຈະຕ້ອງໄດ້ມີການປັບປຸງຕື່ມອີກ ເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງຂອງໂລກ ພາຍໃຕ້ເງື່ອນໄຂຂອງການຫັນປ່ຽນໃໝ່ຢ່າງໄວວາທາງດ້ານເສດຖະກິດ ແລະ ສັງຄົມລາວ ພ້ອມທັງໂຄງສ້າງໃໝ່ຂອງສາກົນເປັນຕົ້ນ ການຫັນປ່ຽນຈາກ ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໄປສູ່ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການປ່ຽນແປງທາງດ້ານແຫຼ່ງທຶນເພື່ອການພັດທະນາ.[1]

ອີງຕາມຜົນ ແລະ ບັນດາຂໍ້ສະເໜີແນະ ຂອງການທົບທວນໃນໄລຍະຜ່ານມາ, ລັດຖະບານ ໄດ້ເອົາໃຈໃສ່ຮັບປະກັນວ່າ ກອງປະຊຸມໂຕະມົນປະຈຳປີ 2016 ໄດ້ຖືກຈັດຂຶ້ນ ແລະ ດຳເນີນໄປໃນຮູບແບບທີ່ມີຄວາມແຕກຕ່າງຈາກຫຼາຍປີທີ່ຜ່ານມາ ໂດຍຫັນປ່ຽນຈາກການຈັດກອງປະຊຸມແບບດັ້ງເດີມ ມາເປັນການຈັດກອງປະຊຸມ ທີ່ມີການສົນທະນາປຶກສາຫາລືກັນໂດຍລວມຕາມວາລະກອງປະຊຸມໃນຫ້ອງປະຊຸມ ແລະ ເປັນກຸ່ມຍ່ອຍທີ່ມີຄະນະນຳພາການສົນທະນາຕາມຫົວຂໍ້ສະເພາະທີ່ຕິດພັນກັບວາລະກອງປະຊຸມ. ດັ່ງນັ້ນ, ກອງປະຊຸມໂຕະມົນປະຈຳປີ 2016 ທີ່ໄດ້ຈັດຂຶ້ນໃນວັນທີ 24-25 ພະຈິກ 2016 ຈຶ່ງໄດ້ຖືກຕີລາຄາ ຈາກທັງຝ່າຍລັດຖະບານ ແລະ ຄູ່ຮ່ວມພັດທະນາຢ່າງກວ້າງຂວາງ ວ່າ ເປັນກອງປະຊຸມທີ່ມີຜົນສຳເລັດສູງ, ເນື່ອງຈາກກອງປະຊຸມດັ່ງກ່າວ ແມ່ນໄດ້ເປີດໂອກາດໃຫ້ທຸກພາກສ່ວນ ໄດ້ສະແດງຄຳຄິດຄຳເຫັນຢ່າງຈິງໃຈ ແລະ ກົງໄປກົງມາ, ຄອບຄຸມໝົດທຸກດ້ານ, ມີການກະກຽມທີ່ຄົບຖ້ວນ ແລະ ໄດ້ຮັບໝາກຜົນຢ່າງເປັນຮູບປະທຳ. ກອງປະຊຸມໂຕະມົນປະຈຳປີດັ່ງກ່າວ ໄດ້ຮັບກຽດການເປັນປະທານໂດຍ ທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ, ທ່ານ ເຈົ້າແຂວງ ແຂວງວຽງຈັນ ແລະ ຜູ້ປະສານງານຂອງອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ເຊິ່ງມີຜູ້ຕາງໜ້າຈາກລັດຖະບານທັງລະດັບສູນກາງ ແລະ ທ້ອງຖິ່ນ, ສະພາແຫ່ງຊາດ, ບັນດາອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ເຂົ້າຮ່ວມທັງໝົດ 300 ທ່ານ.

ຜົນຂອງກອງປະຊຸມໂຕະມົນປະຈຳປີໄດ້ຖືກຜັນຂະຫຍາຍເປັນແຈ້ງການຂອງນາຍົກລັດຖະມົນຕີໃຫ້ແກ່ບັນດາກະຊວງຂະແໜງການ, ແຂວງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ

---

[1] ກະລຸນາເບິ່ງລາຍລະອຽດເພີ່ມເຕີມໃນບົດລາຍງານການປະເມີນຂະບວນການໂຕະມົນ.

ບັນດາປະເດັນທີ່ໄດ້ປຶກສາຫາລືກັນໃນກອງປະຊຸມໂຕະມົນ ເຊິ່ງຮຽກຮ້ອງໃຫ້ມີການຮ່ວມມືຈາກທຸກພາກສ່ວນເພື່ອປະສິດທິຜົນຂອງການພັດທະນາ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໄດ້ລະບຸວຽກງານຂະບວນການໂຕະມົນໄວ້ຢ່າງມີຍຸດທະສາດ ໂດຍສະເພາະແມ່ນການປະກອບສ່ວນ ແລະ ລະດົມການສະໜັບສະໜູນຈາກພາກເອກະຊົນເພື່ອເລັ່ງລັດການບັນລຸເປົ້າໝາຍການພັດທະນາແຫ່ງຊາດ ເປັນຕົ້ນແມ່ນການນໍາພາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ພາຍໃນປີ 2020.

ເຖິງແມ່ນວ່າ ສປປ ລາວ ໄດ້ມີຄວາມຄືບໜ້າໃນການພັດທະນາມະນຸດ ແລະ 3 ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ, ແຕ່ເຫັນວ່າຍັງມີຄວາມຊັກຊ້າ. ດັ່ງນັ້ນ, ຕ້ອງໄດ້ເພີ່ມທະວີການພັດທະນາມະນຸດໃຫ້ຫຼາຍຂຶ້ນກວ່າເກົ່າ ບໍ່ພຽງແຕ່ເພື່ອບັນລຸເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາເທົ່ານັ້ນ, ແຕ່ຍັງເພື່ອກະກຽມຮັບມືກັບສິ່ງທ້າທາຍຕ່າງໆພາຍຫຼັງການຫຼຸດພົ້ນ ພ້ອມທັງຮັບປະກັນໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດຈາກການເປີດປະເທດ, ໂດຍສະເພາະພາຍຫຼັງການເຊື່ອມໂຍງເຂົ້າໃນປະຊາຄົມເສດຖະກິດອາຊຽນຢ່າງເຕັມຕົວ.

ຕໍ່ກັບປະເດັນເຫຼົ່ານີ້, 2017 ເປັນປີທີ່ມີຄວາມສໍາຄັນຫຼາຍສໍາລັບວຽກງານການຮ່ວມມືເພື່ອການພັດທະນາໃນ ສປປ ລາວ ເພື່ອທົບທວນຜົນສໍາເລັດຜ່ານມາ ແລະ ກໍານົດທິດທາງແຜນການໃນຕໍ່ໜ້າ ເພື່ອກະກຽມໃສ່ການປະເມີນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໃນປີ 2018 ໂດຍຄະນະກໍາມະການດ້ານນະໂຍບາຍການພັດທະນາ ຂອງອົງສະຫະຊາຊາດ (CDP), ເພື່ອການກະກຽມບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDG) ແບບສະໝັກໃຈຄັ້ງທໍາອິດໃນປີ 2018 ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ. ພ້ອມນັ້ນ, ຍັງເປັນປີທີ່ມີຄວາມສໍາຄັນໃນການເລັ່ງລັດຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແຫ່ງຊາດ ໂດຍສະເພາະແມ່ນ ການພັດທະນາມະນຸດ ເຊິ່ງເປັນເງື່ອນໄຂໃນການຫຼຸດພົ້ນອອກຈາກ LDC ໃຫ້ໄດ້ພາຍໃນປີ 2020. ເຖິງແມ່ນວ່າ ສປປ ລາວ ບໍ່ທັນສາມາດບັນລຸເງື່ອນໄຂການຫຼຸດພົ້ນໃນໄລຍະທີ່ມີການປະເມີນຂອງຄະນະກໍາມະການ CDP ໃນເດືອນມີນາ 2015 ກໍ່ຕາມ, ແຕ່ກໍ່ມີຄວາມຄືບໜ້າຢ່າງຫຼວງຫຼາຍທຽບໃສ່ເງື່ອນໄຂການຫຼຸດພົ້ນດັ່ງກ່າວ. ອີງຕາມການປະເມີນຄັ້ງຫຼ້າສຸດຂອງຄະນະກໍາມະການຂອງອົງການສະຫະປະຊາຊາດທາງດ້ານເສດຖະກິດ ແລະ ສັງຄົມໃນພາກພື້ນອາຊີ ແລະ ປາຊີຟິກ (ESCAP) ເຫັນວ່າ ສປປ ລາວໄດ້ບັນລຸເງື່ອນໄຂການຫຼຸດພົ້ນອອກຈາກ LDC ທາງດ້ານລວມຍອດລາຍໄດ້ແຫ່ງຊາດ (GNI) ແລ້ວ ແລະ ຖ້າຫາກມີຄວາມຄືບໜ້າຢ່າງຕໍ່ເນື່ອງໃນສອງສາມປີຂ້າງໜ້ານີ້ ຄາດວ່າຈະສາມາດບັນລຸເງື່ອນໄຂທາງດ້ານຊັບສິນມະນຸດໄດ້ທັນກັບການປະເມີນໃນປີ 2018 ຂອງຄະນະກໍາມະການຂອງສະຫະປະຊາຊາດດ້ານນະໂຍບາຍການພັດທະນາ.

## II. <u>ຈຸດປະສົງ ແລະ ຫົວຂໍ້ຂອງກອງປະຊຸມໂຕະມົນປະຈໍາປີ 2017</u>

### 2.1 ຈຸດປະສົງ

ຈຸດປະສົງຂອງກອງປະຊຸມໂຕະມົນປະຈໍາປີຄັ້ງນີ້ແມ່ນເພື່ອ **ເພີ່ມທະວີການເປັນຄູ່ຮ່ວມກັບຫຼາຍພາກສ່ວນ ໃຫ້ມີຄວາມກົມກຽວ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ** VIII **ເພື່ອແນໃສ່ນໍາພາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ**.

ພ້ອມກັນນີ້, ກອງປະຊຸມດັ່ງກ່າວ ຍັງເປັນເວທີຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ 2017 ແລະ ສະເໜີວຽກຈຸດສຸມ ສໍາລັບປີ 2018, ໂດຍສະເພາະແມ່ນເພື່ອກະກຽມໃສ່ການປະເມີນ LDC ຂອງຄະນະກໍາມະການ CDP, ການກະກຽມບົດລາຍງານ SDG ແບບສະໝັກໃຈຄັ້ງທໍາອິດໃນປີ 2018 ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ.

## 2.2 ຫົວຂໍ້ຂອງກອງປະຊຸມໂຕະມົນປະຈຳປີ 2017

**"ເພີ່ມທະວີການເປັນຄູ່ຮ່ວມ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ເພື່ອບັນລຸເປົ້າໝາຍການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ເປົ້າໝາຍເປົ້າໝາຍການພັດທະນາແບບຍືນຍົງ".**

## 2.3 ປະເດັນຈຸດສຸມສະເພາະ ສຳລັບ ການປຶກສາຫາລື:

1. ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ;
2. ການລົງທຶນທີ່ມີຄຸນນະພາບຂອງເອກະຊົນ ສຳລັບ ການພັດທະນາ;
3. ການລົງທຶນໃສ່ ພັດທະນາສີມືແຮງງານ ເຊິ່ງເປັນປັດໃຈສຳຄັນ ໃນການພັດທະນາມະນຸດ;
4. ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ: "ກົນໄກການຈັດຕັ້ງປະຕິບັດ ແລະການຕິດຕາມ ເພື່ອການພັດທະນາທີ່ມີປະສິດທິຜົນ".

# III. <u>ບົດສະເໜີ ແລະ ການປຶກສາຫາລືເພື່ອກະກຽມໃສ່ກອງປະຊຸມໂຕະມົນ</u>

## 3.1 ບົດສະເໜີ

1. **ນຳສະເໜີ ກ່ຽວກັບ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງຈຳປາສັກ: ຄວາມຄືບໜ້າ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ:**
    - ສະພາບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຈຳປາສັກໂດຍລວມ
    - ເປົ້າໝາຍໃຫຍ່ 1: ການພັດທະນາເສດຖະກິດ - ຜົນສຳເລັດ ແລະສິ່ງທ້າທາຍ [ລວມທັງ ປະເດັນບັນຫາທີ່ຕິດພັນກັບ ດັດສະນີຄວາມບອບບາງທາງດ້ານເສດຖະກິດ (EVI) ພ້ອມກັບ ຄວາມພະຍາຍາມ/ຄວາມສຳເລັດ ໃນການດຶງດູດການລົງທຶນທີ່ມີຄຸນນະພາບຈາກພາກເອກະຊົນ];
    - ເປົ້າໝາຍໃຫຍ່ 2: ການພັດທະນາຂະແໜງສັງຄົມ - ຜົນສຳເລັດ ແລະສິ່ງທ້າທາຍ [ລວມທັງ ປະເດັນບັນຫາທີ່ຕິດພັນກັບ ດັດສະນີຊັບສິນມະນຸດ (HAI) ແລະປະເດັນບັນຫາ ກ່ຽວກັບການພັດທະນາສີມືແຮງງານ ໃນຂະແໜງການພັດທະນາຕ່າງໆທີ່ເປັນບູລິມະສິດ ຂອງແຂວງຈຳປາສັກ];
    - ເປົ້າໝາຍໃຫຍ່ 3: ການພັດທະນາດ້ານສິ່ງແວດລ້ອມ - ຜົນສຳເລັດ ແລະສິ່ງທ້າທາຍ [ລວມທັງ ປະເດັນບັນຫາທີ່ຕິດພັນກັບ ວຽກງານສິ່ງແວດລ້ອມ ຂອງດັດສະນີຄວາມບອບບາງທາງດ້ານເສດຖະກິດ];
    - ຍົກໃຫ້ເຫັນຕົວຢ່າງທີ່ດີ ກ່ຽວກັບ ການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືສາມຫຼ່ຽມ ຢູ່ໃນ ແຂວງຈຳປາສັກ.

2. **ນຳສະເໜີ ກ່ຽວກັບ ຄວາມຄືບໜ້າ ແລະສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2017 ແລະສະເໜີວຽກຈຸດສຸມ ສຳລັບປີ 2018**

- ເປົ້າໝາຍໃຫຍ່ 1 (ດ້ານເສດຖະກິດ) - ລວມທັງອ້າງອີງເຖິງ ຄວາມຄືບໜ້າ ແລະບູລິມະສິດ ໃນການບັນລຸດັດສະນີຄວາມສ່ຽງທາງດ້ານເສດຖະກິດ ເຊິ່ງເປັນເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ
- ເປົ້າໝາຍໃຫຍ່ 2 (ດ້ານສັງຄົມ/ການພັດທະນາມະນຸດ) - ລວມທັງອ້າງອີງເຖິງຄວາມຄືບໜ້າ ແລະບູລິມະສິດ ໃນການບັນລຸດັດສະນີຊັບສິນມະນຸດ ເຊິ່ງເປັນເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ
- ເປົ້າໝາຍໃຫຍ່ 3 (ດ້ານສິ່ງແວດລ້ອມ) - ລວມທັງອ້າງອີງເຖິງ ຄວາມຄືບໜ້າ ແລະບູລິມະສິດ ໃນການບັນລຸດັດສະນີຄວາມສ່ຽງທາງດ້ານເສດຖະກິດ ເຊິ່ງເປັນເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ
- ປະເດັນທີ່ຕິດພັນກັບຫຼາຍຂະແໜງການ
- ການຈັດສັນງົບປະມານ/ລາຍຈ່າຍ
- ວຽກຈຸດສຸມ ສຳລັບປີ 2018.

## 3.2 ເອກະສານພື້ນຖານຮັບໃຊ້ກອງປະຊຸມໂຕະມົນ

- ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2017.
- ບົດລາຍງານ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນປະຈຳປີ (ຕາຕະ ລາງຕິດຕາມຄວາມຄືບໜ້າ). ຂໍ້ມູນດັ່ງກ່າວນີ້ ຄວນລະບຸໄວ້ໃນບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ. ພ້ອມກັນນີ້, ຄວາມຄືບໜ້າໃນການຈັດຕັ້ງປະຕິບັດຜົນກອງປະຊຸມໂຕະມົນປະຈຳປີ ຄວນເປັນເນື້ອໃນຕົ້ນຕໍຢູ່ໃນບົດລາຍງານຂອງໜ່ວຍງານຂະແໜງການ (SWG) ທີ່ຈະນຳສະເໜີຢູ່ໃນກອງປະຊຸມໂຕະມົນປະຈຳປີ.
- ບົດສະຫຼຸບລາຍງານປະຈຳປີ ກ່ຽວກັບຜົນສຳເລັດ ຂອງໜ່ວຍງານຂະແໜງການສຳລັບປີ 2017.
- ຄວາມຄືບໜ້າຂອງວຽກງານການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ.
- ຄວາມຄືບໜ້າຂອງວຽກງານການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ.

## 3.3 ການປຶກສາຫາລື ເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ 2017

ການປຶກສາຫາລືເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ 2017 ເປັນການສົນທະນາປຶກສາຫາລືທາງດ້ານນະໂຍບາຍໃນ 4 ຂົງເຂດທີ່ໄດ້ກຳນົດໄວ້ ໂດຍສະເພາະແນໃສ່ປັບປຸງ ແລະຈັດສັນຂົງເຂດທີ່ເປັນບູລິມະສິດເພື່ອປຶກສາຫາລື ແລະ ສ້າງຄວາມເຂົ້າໃຈດ້ານນະໂຍບາຍ ພ້ອມທັງກຳນົດກິດຈະກຳລະອຽດ ແລະ ການສະໜັບສະໜູນທີ່ຈຳເປັນ ເພື່ອບັນລຸເປົ້າໝາຍການພັດທະນາແຫ່ງຊາດ. ຄືດັ່ງທີ່ໄດ້ປະຕິບັດໃນປີຜ່ານມາ, ກົມຮ່ວມມືສາກົນ (ກະຊວງແຜນການ ແລະ ການລົງທຶນ) ຈະໄດ້ປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມບົດແນະນຳ ໃນການການຈັດກອງປະຊຸມປຶກສາຫາລື ກ່ຽວກັບຫົວຂໍ້ຕ່າງໆເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ. ພ້ອມນັ້ນ, ຈະໄດ້ນຳໃຊ້ກົນໄກ ແລະ ການສະໜັບສະໜູນຈາກຄູ່ຮ່ວມພັດທະນາທີ່ມີຢູ່ໃນຂະແໜງການ ເພື່ອຊ່ວຍອຳນວຍຄວາມສະດວກໃຫ້ແກ່ຂະບວນການປຶກສາຫາລືດັ່ງກ່າວ. ຜົນຂອງການປຶກສາຫາລື ຈະຖືກນຳໃຊ້ເຂົ້າໃນການກຽມບົດສະເໜີ ແລະ ເອກະສານສຳຄັນຕ່າງໆ ຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອເປັນພື້ນຖານໃນການສົນທະນາໃນກອງປະຊຸມໂຕະມົນປະຈຳປີ ໂດຍສະເພາະກ່ຽວກັບ 4 ຫົວຂໍ້ທີ່ກຳນົດໄວ້ ດັ່ງລຸ່ມນີ້:

## 1. ການຫຼຸດພົ້ນອອກຈາກ LDC ແລະ ການເຊື່ອມສານເປົ້າໝາຍ SDG

- ແລກປ່ຽນຂໍ້ມູນ ກ່ຽວກັບ ສະພາບການພັດທະນາດ້ານເສດຖະກິດ, ຊັບພະຍາກອນມະນຸດ ແລະສິ່ງແວດລ້ອມ ລວມທັງບັນດາບູລິມະສິດ ແລະກິດຈະກຳທີ່ຕ້ອງປະຕິບັດເພື່ອບັນລຸການຫຼຸດພົ້ນອອກຈາກ LDC;
- ກະກຽມປະເມີນ LDC ໃນປີ 2018 ແລະການສະຫຼຸບຜົນໄດ້ຮັບໃນໄລຍະຍາວຂອງການຫຼຸດພົ້ນອອກຈາກ LDC ສຳລັບ ສປປ ລາວ;
- ຄວາມຄືບໜ້າມາຮອດປະຈຸບັນຂອງການເຊື່ອມສານເປົ້າໝາຍ SDG, ແຜນການຈັດຕັ້ງປະຕິບັດ, ຕົວຊີ້ວັດ, ການຕິດຕາມ, ລາຍງານ ແລະການນຳໃຊ້ຂໍ້ມູນສະຖິຕິ;
- ກະກຽມໃສ່ກອງປະຊຸມລະດັບສູງທີ່ຈະໄດ້ຈັດຂຶ້ນໃນເດືອນ ກໍລະກົດ 2018 ລວມທັງການກະກຽມບົດລາຍງານ SDG ແບບສະໝັກໃຈແຫ່ງຊາດຄັ້ງທຳອິດ.
- ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄຳຄິດຄຳເຫັນ ແລະຂໍ້ສະເໜີແນະນຳ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2

## 2. ການລົງທຶນທີ່ມີຄຸນນະພາບພາກເອກະຊົນເພື່ອການພັດທະນາ

- ໂດຍອີງໃສ່ການປຶກສາຫາລື ແລະບູລິມະສິດທີ່ໄດ້ກຳນົດໃນກອງປະຊຸມທຸລະກິດລາວ ເຊິ່ງໄດ້ຈັດຂຶ້ນໃນເດືອນ ມີນາ 2017 ທີ່ຜ່ານມາ, ກຳນົດຂົງເຂດບູລິມະສິດທີ່ ບັນດາຄູ່ຮ່ວມສາມາດປະກອບສ່ວນໃນການເລັ່ງລັດຈັດຕັ້ງປະຕິບັດໃຫ້ມີຄວາມຄືບໜ້າໃນຂົງເຂດຫຼັກເຊັ່ນ: (1) ການປັບປຸງກົດໝາຍຕ່າງໆ ເປັນຕົ້ນ ກົດໝາຍສົ່ງເສີມການລົງທຶນ ແລະການຈັດຕັ້ງປະຕິບັດ "ການບໍລິການປະຕູດຽວ" (2) ການເກັບອາກອນ; (3) ຂັ້ນຕອນການຂົນສົ່ງ ແລະການນຳເຂົ້າ/ສົ່ງອອກ; (4) ການອອກໃບທະບຽນ/ໃບອະນຸຍາດທຸລະກິດ; (5) ການເຂົ້າເຖິງແຫຼ່ງການເງິນ; ແລະ (6) ການພັດທະນາຕະຫຼາດແຮງງານ;
- ກຳນົດຕົວຢ່າງກ່ຽວກັບການປະກອບສ່ວນຂອງການລົງທຶນພາກເອກະຊົນທີ່ມີ 'ຄຸນນະພາບ' ເຂົ້າໃນວຽກງານການຫຼຸດພົ້ນອອກຈາກ LDC ແລະ/ຫຼື ການບັນລຸເປົ້າໝາຍ SDG ຢູ່ໃນຂະແໜງ ການຕົ້ນຕໍ ເປັນຕົ້ນແມ່ນ ກະສິກຳ, ອຸດສາຫະກຳ/ອຸດສາຫະກຳປຸງແຕ່ງ, ການຄ້າ/ການບໍລິການເຊັ່ນ:ຂະແໜງການທ່ອງທ່ຽວ,ຂະແໜງການບໍລິການດ້ານການເງິນ ແລະອື່ນໆ.
- ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄຳຄິດຄຳເຫັນ ແລະຂໍ້ສະເໜີແນະນຳ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2

## 3. ການລົງທຶນໃສ່ການສ້າງສີມືແຮງງານ/ທັກສະເພື່ອປະກອບສ່ວນເຂົ້າໃນການພັດທະນາມະນຸດ

- ສະໜັບສະໜູນໜ່ວຍງານຂະແໜງການສຶກສາ ໃຫ້ຄົ້ນຄວ້າຊອກຫາວິທີທາງໃນການເລັ່ງລັດຈັດຕັ້ງປະຕິບັດການພັດທະນາສີມື/ທັກສະໃຫ້ແກ່ກຳລັງແຮງງານ ກໍ່ຄືການຈັດຕັ້ງປະຕິບັດຍຸດທະສາດການພັດທະນາມະນຸດ ເພື່ອແກ້ໄຂບັນຫາການຂາດແຄນແຮງງານທີ່ມີສີມື ເຊິ່ງຈະຊ່ວຍປະກອບສ່ວນເຂົ້າໃນການພັດທະນາພາກທຸລະກິດ/ເອກະຊົນ ກໍ່ຄືການພັດທະນາປະເທດຊາດ;
- ປຶກສາຫາລືກ່ຽວກັບປະໂຫຍດຈາກການມີແຮງງານໜຸ່ມຫຼາຍ ແຕ່ໃນປະຈຸບັນແຮງງານທີ່ມີສີມືໃນລາວຍັງມີຈຳນວນໜ້ອຍ ແລະອາຊີບທີ່ສ້າງມູນຄ່າເພີ່ມສ່ວນໃຫຍ່ແມ່ນຍັງເປັນແຮງງານຕ່າງປະເທດທີ່ມາຈາກບັນດາປະເທດເພື່ອນບ້ານ. ຈາກນັ້ນ, ປຶກສາຫາລືກ່ຽວກັບຄວາມຄືບໜ້າ, ສິ່ງທ້າທາຍ/ສິ່ງກີດຂວາງ ແລະແຜນໃນຕໍ່ໜ້າເພື່ອເຮັດໃຫ້ຕະຫຼາດແຮງງານຂອງລາວມີຄວາມຫຼາກຫຼາຍ ແລະມີຄວາມສາມາດໃນການແຂ່ງຂັນຫຼາຍຂຶ້ນ;

- ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄຳຄິດຄຳເຫັນ ແລະຂໍ້ສະເໜີແນະນຳ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2.

4. **ເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ: "ກົນໄກການຈັດຕັ້ງປະຕິບັດ ແລະການຕິດຕາມ ເພື່ອການພັດທະນາທີ່ມີປະສິດທິຜົນ"**
   - ປຶກສາຫາລືກ່ຽວກັບຂອບນະໂຍບາຍ ແລະສະຖາບັນສຳລັບການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ;
   - ກຳນົດແນວຄິດລິເລີ່ມໃນການຮ່ວມມືແບບໃຕ້-ໃຕ້ ໃນຂອບອາຊຽນທີ່ແທດເໝາະກັບຫົວຂໍ້ທີ່ເປັນບູລິມະສິດ ຊຶ່ງສ່ອງແສງໃຫ້ເຫັນຜົນໄດ້ຮັບຂອງການພັດທະນາທີ່ມີຄຸນນະພາບສູງ ໂດຍສະເພາະການປະກອບສ່ວນໃນການຫຼຸດພົ້ນອອກຈາກ LDC ແລະການບັນລຸເປົ້າໝາຍ SDG ບໍ່ວ່າຈະເປັນດ້ານເສດຖະກິດ ກໍ່ຄືດ້ານສັງຄົມ ແລະສິ່ງແວດລ້ອມ ເຊິ່ງສາມາດເຫັນໄດ້ ໃນການລົງຢ້ຽມຢາມໂຄງການພາກສະໜາມຢູ່ແຂວງ;
   - ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄຳຄິດຄຳເຫັນ ແລະຂໍ້ສະເໜີແນະນຳ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2.

## 3.4 ການສົນທະນາ, ປຶກສາຫາລື ແລະ ປະສານງານ ຢູ່ຂັ້ນຂະແໜງການ

### 3.4.1 ແຜນວຽກທີ່ເລັງໃສ່ໝາກຜົນ

ໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ເປັນກົນໄກພື້ນຖານໃນການສົນທະນາ, ປຶກສາຫາລື ແລະ ປະສານງານທາງດ້ານເນື້ອໃນ. ເພື່ອຮັບປະກັນທ່າແຮງຂອງກົນໄກດັ່ງກ່າວ, ການສ້າງແຜນວຽກທີ່ເລັງໃສ່ໝາກຜົນເປັນຫຼັກ ແມ່ນວຽກທີ່ສຳຄັນ. ສະນັ້ນ, ແນະນຳໃຫ້ໜ່ວຍງານຂະແໜງການທັງໝົດ ສ້າງ ຍຸດທະສາດ, ນະໂຍບາຍ ແລະຜົນວຽກຂອງຂະແໜງຕົນ ລວມທັງແຜນການຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນລະດັບສູງ ແລະ/ຫຼື ກອງປະຊຸມໂຕະມົນປະຈຳປີ. ເຊິ່ງບັນດາໜ່ວຍງານຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ກໍ່ໄດ້ກຳນົດກິດຈະກຳຈຳນວນໜຶ່ງໃນການຕິດຕາມຄວາມຄືບໜ້າດັ່ງກ່າວ ຢູ່ໃນກອງປະຊຸມປຶກສາຫາລືກ່ຽວກັບວຽກງານຂະບວນການໂຕະມົນ (RTP Retreat) ປະຈຳປີ 2016 ແລະ 2017. ດັ່ງນັ້ນ, ການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວໂດຍພື້ນຖານແລ້ວ ແມ່ນຈະໄດ້ລາຍງານຢູ່ໃນກອງປະຊຸມປຶກສາຫາລືຂອງແຕ່ລະໜ່ວຍງານຂະແໜງການ ເຊິ່ງມີບັນດາສະມາຊິກ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງໜ່ວຍງານເຂົ້າຮ່ວມ.

### 3.4.2 ຂອບໜ້າວຽກສະບັບປັບປຸງ

ຂອບໜ້າວຽກຂອງໜ່ວຍງານຂະແໜງການ ແມ່ນຕ້ອງໄດ້ແນໃສ່ບັນລຸບັນດາໝາກຜົນຕ່າງໆຂອງຂະແໜງ ການ. ພ້ອມນີ້, ຂອບໜ້າວຽກຕ້ອງມີເນື້ອໃນສັ້ນກະທັດຮັດ ແລະ ຈະແຈ້ງ ວ່າ ໜ່ວຍງານຂະແໜງການຈະປະກອບສ່ວນເຂົ້າໃນການບັນລຸໝາກຜົນໃນລະດັບຊາດຄືແນວໃດ. ເຊິ່ງໝາກຜົນທີ່ຈະຕ້ອງບັນລຸອາດປະກອບມີບັນດາບົດລາຍງານໃນຫົວຂໍ້ໃດໜຶ່ງ, ຂະແໜງການ (ຍ່ອຍ) ຫຼື ຍຸດທະສາດຂອງຂະແໜງການ, ສ້າງຄວາມເຂົ້າໃຈຮ່ວມກັນໃນການແກ້ໄຂບັນຫາສະເພາະທີ່ຕິດພັນກັບຂະແໜງການ ຫຼື ບົດລາຍງານເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ. ຄາດຄະເນຜົນໄດ້ຮັບຂອງແຕ່ລະໜ່ວຍງານຂະແໜງການ ແມ່ນຕ້ອງສອດຄ່ອງກັບແຜນການຕິດຕາມຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນລະດັບສູງ ກໍ່ຄືກອງປະຊຸມໂຕະມົນປະຈຳປີ. ເວົ້າລວມແລ້ວ, ໜ່ວຍງານຂະແໜງການ ຈະຕ້ອງລາຍງານຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານຂອງຂະແໜງການ.

**3.4.3 ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງຂະແໜງການ ທີ່ເລັງໃສ່ໝາກຜົນເປັນຫຼັກ**

ດັ່ງທີ່ໄດ້ລະບຸໄວ້ໃນຂໍ້ 3.4.2, ໜ່ວຍງານຂະແໜງການຈະຕ້ອງໄດ້ລາຍງານ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດກິດຈະກຳຂອງຂະແໜງການຕົນ. ເພື່ອອຳນວຍຄວາມສະດວກໃຫ້ແກ່ໜ່ວຍງານຂະແໜງການ ໃນການກະກຽມບົດລາຍງານຄວາມຄືບໜ້າດັ່ງກ່າວ (ແນະນຳໃຫ້ເບິ່ງແບບຢ່າງບົດລາຍງານ ໃນເອກະສານຊ້ອນທ້າຍ 1). **<u>ກະລຸນາສົ່ງບົດລາຍງານຄວາມຄືບໜ້າຂອງຂະແໜງການ ໃຫ້ແກ່ກອງເລຂາ ຄະນະຊີ້ນຳລະດັບເພື່ອຂະບວນການໂຕະມົນ ພາຍໃນ ວັນທີ 29 ກັນຍາ 2017.</u>**

**3.4.4 ແຜນການຈັດກິດຈະກຳຕ່າງໆ**

ຄວນມີການແຈ້ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຊາບກ່ຽວກັບຕາຕະລາງເວລາ ສຳລັບ ການຈັດປະຊຸມໂຕະມົນລະດັບສູງ ຫຼື ກອງປະຊຸມໂຕະມົນປະຈຳປີ ລວມທັງກອງປະຊຸມລະລັບຕ່າງໆ ຂອງບັນດາໜ່ວຍງານຂະແໜງການ ທີ່ຈະໄດ້ຈັດຂຶ້ນພາຍໃນປີ. ຕາຕະລາງເວລາດັ່ງກ່າວຈະຊ່ວຍເຮັດໃຫ້ທຸກພາກສ່ວນສາມາດຄາດຄະເນ ແລະ ສື່ສານເຊິ່ງກັນແລະກັນ ພ້ອມທັງຊ່ວຍກຳນົດໜ້າວຽກຈຸດສຸມເພື່ອບັນລຸໝາກຜົນທີ່ກຳນົດໄວ້ຢ່າງມີປະສິດທິຜົນ. ເພື່ອຊ່ວຍອຳນວຍຄວາມສະດວກໃຫ້ແກ່ວຽກງານດັ່ງກ່າວ, ບົດແນະນຳສະບັບນີ້ ໄດ້ກຳນົດໄວ້ໃນພາກທີ V. ຊຶ່ງຮຽກຮ້ອງໃຫ້ບັນດາໜ່ວຍງານຂະແໜງການ ສົ່ງແຜນການຈັດກິດຈະກຳຕ່າງໆ ໃຫ້ ກົມຮ່ວມມືສາກົນ (ກະຊວງແຜນການ ແລະ ການລົງທຶນ) ເປັນປະຈຳແຕ່ລະໄຕມາດ.

**3.4.5 ການຈັດກອງປະຊຸມລະດັບຕ່າງໆ ຂອງໜ່ວຍງານຂະແໜງການ ແລະ ປະເດັນສຳຄັນທີ່ຈະນຳໄປປຶກສາຫາລືກັນ ໃນກອງປະຊຸມໂຕະມົນປະຈຳປີ 2017**

ຮຽກຮ້ອງໃຫ້ທຸກໜ່ວຍງານຂະແໜງການ ຕ້ອງໄດ້ຈັດ ກອງປະຊຸມປຶກສາຫາລືພາຍໃນຂະແໜງການຕົນ ລວມທັງຈັດຕັ້ງປະຕິບັດບັນດາກິດຈະກຳທີ່ສຳຄັນຕ່າງໆ. ໃນຂະນະທີ່ ການປຶກສາຫາລືກ່ຽວກັບປະເດັນທີ່ຕິດພັນກັບຂະແໜງການ ມີຄວາມສຳຄັນ,ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ແນະນຳໃຫ້ ແຕ່ລະໜ່ວຍງານຂະແໜງການ ຄົ້ນຄວ້າກຳນົດປະເດັນສຳຄັນຂອງຂະແໜງການ ເພື່ອນຳໄປປຶກຫາລືກັນ ຢູ່ໃນກອງປະຊຸມໂຕະມົນປະຈຳປີ 2017, ໂດຍສຸມໃສ່:

- ຜົນສຳເລັດ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII ຢູ່ໃນລະດັບຊາດ, ຂະແໜງການ ຫຼື ແຂວງ. ເຊິ່ງໜ່ວຍງານຂະແໜງການຈະໄດ້ກະກຽມບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ ໂດຍອີງຕາມແຜນການຕິດຕາມຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນ. ເຊິ່ງບົດລາຍງານດັ່ງກ່າວນີ້ ຈະຖືກນຳໃຊ້ເປັນຂໍ້ມູນພື້ນຖານໃນການກະກຽມເອກະສານພື້ນຖານຮັບໃຊ້ກອງປະຊຸມໂຕະມົນ.
- ການເປັນຄູ່ຮ່ວມທີ່ມີປະສິດທິຜົນ ເປັນຫົວຂໍ້ທີ່ຕິດພັນກັບຫຼາຍຂະແໜງການ: ເນື່ອງຈາກວ່າອີງປະກອບຕົ້ນຕໍຂອງຖະແຫຼງການວຽງຈັນ ວ່າດ້ວຍ ການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ໄດ້ເສີມຂະຫຍາຍການເປັນຄູ່ຮ່ວມກັບຫຼາຍພາກສ່ວນເພື່ອການພັດທະນາ, ສະນັ້ນການເປັນຄູ່ຮ່ວມຈຶ່ງກາຍເປັນປະເດັນຕົ້ນຕໍ ຂອງກອງປະຊຸມໂຕະມົນປະຈຳປີນີ້; ໂດຍສະເພາະແມ່ນຈະໄດ້ສຸມໃສ່ການເປັນຄູ່ຮ່ວມກັບ ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ບັນດາປະເທດອາຊຽນ ຫຼື ປະເທດຢູ່ໃນພາກພື້ນ.

### 3.4.6 ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ພົບປະກັບ ກອງເລຂາຂອງບັນດາໜ່ວຍງານຂະແໜງການ

ເພື່ອຊ່ວຍອຳນວຍຄວາມສະດວກດ້ານການປະສານງານ ລະຫວ່າງ ຂະແໜງການຕ່າງໆ ແລະ ສ້າງຄວາມເຂົ້າໃຈທີ່ເປັນເອກະພາບກັນ ກ່ຽວກັບ ການກະກຽມກອງປະຊຸມໂຕະມົນປະຈຳປີ, ກົມຮ່ວມມືສາກົນ/ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ມີຈຸດປະສົງໄປພົບປະກັບກອງເລຂາຂອງແຕ່ລະໜ່ວຍງານຂະແໜງການ (ຜູ້ປະສານງານ ຈາກກະຊວງຂະແໜງການທີ່ເປັນປະທານ ແລະ ຄູ່ຮ່ວມພັດທະນາທີ່ເປັນປະທານຮ່ວມ) ໃນລະຫວ່າງເດືອນ ກໍລະກົດ ຫາ ເດືອນ ຕຸລາ 2017, ເຊິ່ງຈະໄດ້ສົ່ງໜັງສືຂໍນັດພົບກ່ອນລ່ວງໜ້າ.

### 3.4.7 ກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ

ກົມຮ່ວມມືສາກົນ ຈະໄດ້ຈັດກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ຢ່າງໜ້ອຍ 2 ຄັ້ງ ກ່ອນຮອດ ກອງປະຊຸມໂຕະມົນປະຈຳປີ 2017. ກອງປະຊຸມດັ່ງກ່າວ ຈະໄດ້ສຸມໃສ່ປຶກສາຫາລື ກ່ຽວກັບຄວາມຄືບໜ້າໃນການກະກຽມກອງປະຊຸມໂຕະມົນປະຈຳປີ 2017 ແລະ ປຶກສາຫາລືກ່ຽວກັບບັນຫາຕົ້ນຕໍທີ່ຕ້ອງການຄວາມກະຈ່າງແຈ້ງ ແລະ ສ້າງຄວາມເຂົ້າໃຈທີ່ເປັນເອກະພາບກັນ.

### 3.4.8 ງານວາງສະແດງ ຜົນສຳເລັດ ຂອງວຽກງານການຮ່ວມມືເພື່ອການພັດທະນາ

ງານວາງສະແດງ ແມ່ນຈະໄດ້ຈັດຂຶ້ນໄປຄຽງຄູ່ກັບກອງປະຊຸມໂຕະມົນປະຈຳປີ 2017 ເຊິ່ງຈະໄດ້ເຊີນທຸກໜ່ວຍງານຂະແໜງການ ເຂົ້າຮ່ວມວາງສະແດງຜົນສຳເລັດໃນການຈັດຕັ້ງປະຕິບັດກິດຈະກຳຂອງຂະແໜງ ຕົນ ເພື່ອປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ ແລະ ການເຕີບໂຕແບບສົມສ່ວນ. ຫົວຂໍ້/ເນື້ອໃນ ຂອງງານວາງສະແດງດັ່ງກ່າວ ແມ່ນຈະສຸມໃສ່ການເປັນຄູ່ຮ່ວມທີ່ມີປະສິດທິຜົນ ຢູ່ຂັ້ນຂະແໜງການ ແລະ ຂັ້ນແຂວງ ເພື່ອການພັດທະນາແບບຍືນຍົງ ແລະ ການເຕີບໂຕແບບສົມສ່ວນ. ງານວາງສະແດງ ຈະສ່ອງແສງໃຫ້ເຫັນເຖິງ ການຮ່ວມມື ແລະເຮັດວຽກຮ່ວມກັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ ພ້ອມທັງພາກສ່ວນອື່ນໆທີ່ກ່ຽວຂ້ອງ ເປັນຕົ້ນ ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ ຢູ່ໃນລະດັບຕ່າງໆ ເພື່ອບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຫຼຸດພົ້ນອອກຈາກ LDC ແລະ ເປົ້າໝາຍ SDGs.

ສະນັ້ນ, ງານວາງສະແດງ ຈະເປັນການເຜີຍແຜ່ຜົນສຳເລັດຂອງວຽກງານການຮ່ວມມືເພື່ອການພັດທະນາທີ່ຈັດຕັ້ງປະຕິບັດໂດຍບັນດາໜ່ວຍງານຂະແໜງການ ແລະພາກສ່ວນທີ່ກ່ຽວຂ້ອງ; ໂດຍສະເພາະ ນຳສະເໜີ ວິທີການ / ກໍລະນີ / ໜັງສືເລື່ອງ ແລະ ເອກະສານສິ່ງພິມຕ່າງໆ ເພື່ອແກ້ໄຂສິ່ງທ້າທາຍຂອງການພັດທະນາ ກໍ່ຄືການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຫຼຸດພົ້ນອອກຈາກ LDC ແລະ ການບັນລຸເປົ້າໝາຍ SDGs ພາຍໃຕ້ການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ.

ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ຈະໄດ້ຈັດປະຊຸມເພື່ອແນະນຳບັນດາໜ່ວຍງານຂະແໜງການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຢ່າງໜ້ອຍ 1 ເດືອນກ່ອນກອງປະຊຸມໂຕະມົນປະຈຳປີ 2017 ເພື່ອແນະນຳລະອຽດ ກ່ຽວກັບການກະກຽມຈັດງານວາງສະແດງດັ່ງກ່າວ.

# IV. ຮູບແບບ ແລະ ວາລະກອງປະຊຸມໂຕະມົນປະຈຳປີ 2017

**ກອງປະຊຸມໂຕະມົນປະຈຳປີ 2017 ແມ່ນຈະຈັດຂຶ້ນຢູ່ແຂວງ** ເຊິ່ງຈະເປັນໂອກາດອັນດີໃຫ້ແກ່ການນຳເອົາ ການປຶກສາຫາລືທາງດ້ານນະໂຍບາຍ ໄປສູ່ ການລົງຢ້ຽມຢາມ 'ພາກສະໜາມ' ເຊິ່ງເປັນຂົງເຂດທີ່ຕ້ອງການໄດ້ຮັບຜົນປະໂຫຍດຈາກການພັດທະນາຢ່າງແທ້ຈິງ. ແຕ່ຕ້ອງໄດ້ພິຈາລະນາເຖິງຄວາມສາມາດທາງດ້ານງົບປະມານ, ການເດີນທາງ, ການຂົນສົ່ງ, ການເຂົ້າຮ່ວມ, ຄວາມປອດໄພ ແລະອື່ນໆ.

## 4.1 ຮູບແບບ ຂອງກອງປະຊຸມໂຕະມົນປະຈຳປີ 2017

**<u>ມື້ທີ 1, ການປຶກສາຫາລືລະດັບວິຊາການທີ່ມີຄະນະນຳພາການສົນທະນາ ແລະ ການລົງຢ້ຽມຢາມໂຄງການພັດທະນາ ພາກສະໜາມ</u>**

**ບັນດາຫົວຂໍ້ສຳລັບການປຶກສາຫາລືທີ່ມີຄະນະນຳພາສົນທະນາທີ່ຕິດພັນກັບຂະແໜງການ**

1. ການຫຼຸດພົ້ນອອກຈາກ LDC ແລະ ການເຊື່ອມສານເປົ້າໝາຍ SDG
2. ການລົງທຶນຂອງພາກເອກະຊົນທີ່ມີຄຸນນະພາບ ເພື່ອການພັດທະນາ
3. ການລົງທຶນໃສ່ການພັດທະນາສີມືແຮງງານເພື່ອປະກອບສ່ວນເຂົ້າໃນການພັດທະນາມະນຸດ
4. ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ

ຈະໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບ 4 ຫົວຂໍ້ດັ່ງກ່າວນີ້ ຢູ່ທີ່ນະຄອນຫຼວງວຽງຈັນ ຢ່າງໜ້ອຍ 2-3 ອາທິດ ກ່ອນ ການຈັດກອງປະຊຸມໂຕະມົນປະຈຳປີ ຢູ່ແຂວງ.

**ການລົງຢ້ຽມຢາມໂຄງການພັດທະນາພາກສະໜາມ**

ການລົງຢ້ຽມຢາມໂຄງການພາກສະໜາມ ມີຄວາມສຳຄັນຫຼາຍ ຕໍ່ກອງປະຊຸມໂຕະມົນປະຈຳປີ ເພາະຜູ້ເຂົ້າຮ່ວມຈະໄດ້ເຫັນ ຕົວຢ່າງຄວາມຄືບໜ້າ/ຜົນສຳເລັດ ໃນການຈັດຕັ້ງປະຕິບັດໂຄງການຢ່າງເປັນຮູບປະທຳ ແລະ ຄວາມເຂົ້າໃຈຂອງພາກສ່ວນຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ ໃນການນຳສະເໜີ ວິທີການ, ສິ່ງທ້າທາຍ ແລະ ຜົນໄດ້ຮັບ ຈາກການຈັດຕັ້ງປະຕິບັດຕົວຈິງ. ເຊິ່ງການນຳສະເໜີດັ່ງກ່າວ ອາດກ່ຽວພັນໂດຍກົງປັດໃຈຕົ້ນຕໍຂອງຄວາມສຳເລັດ, ບົດຮຽນທີ່ຖອດຖອນໄດ້, ກົນໄກ ແລະ ຂະບວນການຕ່າງໆ ລວມທັງແຫຼ່ງຊັບພະຍາກອນ ແລະ ຄວາມອາດສາມາດ ທີ່ໄດ້ປະກອບສ່ວນເຮັດໃຫ້ມີຜົນສຳເລັດໃນຂັ້ນພື້ນຖານ. ການຮ່ວມມືກັບພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ບັນດາຄູ່ຮ່ວມພັດທະນາໃນຂອບອາຊຽນ ແລະ ພາກພື້ນ ເປັນຫົວຂໍ້ຕົ້ນຕໍທີ່ຕິດພັນກັບຫຼາຍຂະແໜງການ ສຳລັບກອງປະຊຸມໂຕະມົນປະຈຳປີຄັ້ງນີ້ ໂດຍສະເພາະແມ່ນ ການແລກປ່ຽນຄວາມຮູ້ ແລະ ທັກສະ ພາຍໃຕ້ຂອບການຮ່ວມມືແບບໃຕ້-ໃຕ້, ການຮັບຮອງເອົາເຕັກໂນໂລຊີ ແລະ ບົດຮຽນຕ່າງໆທີ່ຖອດຖອນໄດ້ ເພື່ອນຳໄປປັບປຸງວຽກງານໃນຕໍ່ໜ້າ ທັງນີ້ກໍ່ເພື່ອເລັ່ງລັດການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະປະສິດທິຜົນສູງຂຶ້ນ.

**<u>ມື້ທີ 2, ກອງປະຊຸມປຶກສາຫາລື ລະດັບນະໂຍບາຍ (ກອງປະຊຸມໂຕະມົນປະຈຳປີ)</u>**

ວາລະກອງປະຊຸມໂຕະມົນປະຈຳປີ ແມ່ນປະກອບມີດັ່ງນີ້:

- ພາກກ່າວເປີດກອງປະຊຸມຢ່າງເປັນທາງການ
- ພາກການນຳສະເໜີ: ມີ 3 ບົດສະເໜີ ກ່ຽວກັບ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ, ແຜນການບັນລຸເປົ້າໝາຍການຫຼຸດພົ້ນອອກຈາກ LDC, ທິດທາງແຜນການໃນການເຊື່ອມສານ ແລະຈັດຕັ້ງປະຕິບັດເປົ້າໝາຍ SDG ແລະ ການເພີ່ມທະວີການຮ່ວມມືກັບພາກເອກະຊົນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.

- ລາຍງານຜົນຂອງກອງປະຊຸມປຶກສາຫາລື ທີ່ມີຄະນະສົນທະນາ
- ຈັດສັນເວລາຢ່າງພຽງພໍ ໃຫ້ແກ່ ການສົນທະນາ, ຖາມ & ຕອບ
- ຂໍ້ສະເໜີແນະ, ສະຫຼູບສັງລວມປະເດັນບັນຫາທີ່ໄດ້ຍົກຂຶ້ນປຶກສາຫາລືໃນກອງປະຊຸມ ແລະ ກ່າວປິດກອງປະຊຸມຢ່າງເປັນທາງການ.

### 4.2 ການເຂົ້າຢັ້ງມຂໍ່ານັບ ທ່ານ ນາຍົກລັດຖະມົນຕີ (ເພື່ອລາຍງານຜົນຂອງກອງປະຊຸມໂດຍສັງເຂບ (ອັນເວລາຈະໄດ້ແຈ້ງໃຫ້ຊາບຕາມພາຍຫຼັງ)

- ບັນດາຫົວໜ້າຄະນະຜູ້ແທນກອງປະຊຸມໂຕະມົນປະຈໍາປີ (ໂດຍປົກກະຕິແລ້ວ ແມ່ນມີຄູ່ຮ່ວມພັດທະນາ ເຂົ້າຮ່ວມປະມານ 12 ຫາ 15 ພາກສ່ວນ)
- ລາຍງານຜົນຂອງກອງປະຊຸມໂຕະມົນປະຈໍາປີ 2017 ໂດຍສັງເຂບ
- ສືບຕໍ່ການຈັດກອງປະຊຸມພົບປະສົນທະນາ ແລະ ແລກປ່ຽນບົດຮຽນ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາໃນລະດັບສູງ ທີ່ໄດ້ຮັບຜົນດີໂດຍຖອດຖອນບົດຮຽນຈາກການຈັດກອງປະຊຸມໂຕະມົນປະຈໍາປີ 2017.

## V. ບັນດາກິດຈະກໍາ ແລະ ກອງປະຊຸມປຶກສາຫາລືຕ່າງໆທີ່ສໍາຄັນ ເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈໍາປີ 2017

### 5.1 ແຜນວຽກ ແລະ ກໍານົດເວລາ

| ກິດຈະກໍາ | ກໍານົດເວລາ |
|---|---|
| 1. ການສ້າງແຜນວຽກສໍາລັບກະກຽມກອງປະຊຸມໂຕະມົນປະຈໍາປີ 2017 | ມັງກອນ - ມີນາ 2017 |
| 2. ການເຜີຍແຜ່ແຜນດໍາເນີນງານຖະແຫຼງການວຽງຈັນ - ລະດັບຊາດ ແລະ ທ້ອງຖິ່ນ | ມັງກອນ - ພຶດສະພາ 2017 |
| 3. ການສ້າງ ແລະຈັດຕັ້ງປະຕິບັດ ຂອບການຕິດຕາມຂອງຖະແຫຼງການວຽງຈັນ | ເມສາ - ກັນຍາ 2017 |
| 4. ການປັບປຸງດໍາລັດເລກທີ 75 ແລະ ການສ້າງຍຸດທະສາດແຫ່ງຊາດ ວ່າດ້ວຍການຮ່ວມມືເພື່ອການພັດທະນາ (ລວມທັງການປຶກສາຫາລືກັບບັນດາຄູ່ຮ່ວມພັດທະນາ) | ມັງກອນ - ກັນຍາ 2017 |
| 5. ກອງປະຊຸມປຶກສາຫາລື ກ່ຽວກັບວຽກງານຂະບວນການໂຕະມົນ | ມີນາ 2017 |
| 6. ກອງປະຊຸມຄະນະຊີ້ນໍາລະດັບຊາດເພື່ອຕິດຕາມການຈັດຕັ້ງປະຕິບັດເປົ້າໝາຍ SDG | ເມສາ - ທັນວາ 2017 |
| 7. ກອງປະຊຸມຄະນະຊີ້ນໍາລະດັບຊາດເພື່ອຂະບວນການໂຕະມົນ | ເມສາ - ພຶດສະພາ & ຕຸລາ - ພະຈິກ 2017 |
| 8. ບົດແນະນໍາໃນການກະກຽມກອງປະຊຸມໂຕະມົນປະຈໍາປີ 2017 ໃຫ້ແກ່ກອງເລຂາຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ | ມິຖຸນາ - ສິງຫາ 2017 |

| ກິດຈະກຳ | ກຳນົດເວລາ |
| --- | --- |
| 9. ກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ | ປະຈຳໄຕມາດ |
| 10. ກອງປະຊຸມຂອງໜ່ວຍງານຂະແໜງການ (ລະດັບວິຊາການ - ລະດັບສູງ) | ພາຍໃນປີ |
| 11. ສ້າງບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2017 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2018 | ກັນຍາ - ທັນວາ 2017 |
| 12. ຈັດກອງປະຊຸມລະຫວ່າງກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ແລະ ກອງເລຂາຂອງເປົ້າໝາຍ SDG | ພາຍໃນປີ |
| 13. ສ້າງບົດລາຍງານການຈັດຕັ້ງປະຕິບັດການຊ່ວຍເຫຼືອທາງການເພື່ອການພັດທະນາ (6 ເດືອນຕົ້ນປີ ແລະ ປະຈຳປີ) | ກຳນົດເວລາຈະແຈ້ງຕາມພາຍຫຼັງ |
| 14. ກະກຽມສົ່ງບັດເຊີນກອງປະຊຸມໂຕະມົນປະຈຳປີ 2017 | ຢ່າງໜ້ອຍ 2 ເດືອນ ກ່ອນ RTIM |
| 15. ສ້າງບົດລາຍງານຄວາມຄືບໜ້າຂອງໜ່ວຍງານຂະແໜງການ ເຊິ່ງກະກຽມໂດຍບັນດາໜ່ວຍງານຂະແໜງການ | 29 ກັນຍາ 2017 |
| 16. ສ້າງເອກະສານພື້ນຖານຮັບໃຊ້ກອງປະຊຸມໂຕະມົນປະຈຳປີ 2017 | ຢ່າງໜ້ອຍ 1 ເດືອນ ກ່ອນ RTIM |
| 17. ຈັດກອງປະຊຸມພົບປະນັກຂ່າວ | ປະຈຳໄຕມາດ |
| 18. ຈັດປະຊຸມປຶກສາຫາລື ກ່ຽວກັບຫົວຂໍ້ຕ່າງໆ ເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ 2017 | ຢ່າງໜ້ອຍ 1 ເດືອນ ກ່ອນ RTIM |
| 19. ຈັດກອງປະຊຸມໂຕະມົນປະຈຳປີ 2017 ແລະ ນຳພາຫົວໜ້າຄະນະຜູ້ແທນກອງປະຊຸມໂຕະມົນ ເຂົ້າຢ້ຽມຂຳນັບ ທ່ານ ນາຍົກລັດຖະມົນຕີ ເພື່ອລາຍງານຜົນຂອງກອງປະຊຸມໂຕະມົນ | ທ້າຍເດືອນ ພະຈິກ 2017 |

### 5.2 ຈຸດປະສານງານພາຍໃນກົມຮ່ວມມືສາກົນ (ກະຊວງແຜນການ ແລະ ການລົງທຶນ)

ຖ້າມີຂໍ້ສົນໃຈທີ່ຕິດພັນກັບການກະກຽມກອງປະຊຸມໂຕະມົນປະຈຳປີ 2017, ກະລຸນາຕິດຕໍ່ພົວພັນເຖິງ:


- ທ່ານ ນ. ສີສົມບູນ ອຸນາວົງ
  ຫົວໜ້າກົມຮ່ວມມືສາກົນ,
  ກະຊວງແຜນການ ແລະ ການລົງທຶນ
  ໂທ: +856 20 5551 4300
  ອີເມວ: osisomboun@yahoo.com

## ປະກອບເນື້ອໃນສະເພາະ ແລະ ຂໍ້ມູນກ່ຽວກັບຂະບວນການກະກຽມ

- ທ່ານ ສີສົມພອນ ເພັດດາວເຮືອງ
  ຮອງຫົວໜ້າກົມຮ່ວມມືສາກົນ,
  ກະຊວງແຜນການ ແລະ ການລົງທຶນ
  ໂທ: + 856 20 2222 1991
  ອີເມວ: sysomphorn.dic@gmail.com

- ທ່ານ ປອ. ອາລຸນຍາເດດ ຣາຊະພົນ
  ຮອງຫົວໜ້າກົມຮ່ວມມືສາກົນ,
  ກະຊວງແຜນການ ແລະ ການລົງທຶນ
  ໂທ: +856 20 2223 7774
  ອີເມວ: arounyadeth@gmail.com

- ທ່ານ ມໍລະກົດ ວົງໄຊ
  ຫົວໜ້າພະແນກສະຫະປະຊາຊາດ
  ກົມຮ່ວມມືສາກົນ, ກະຊວງ ຜທ
  ໂທ: +856 20 2244 8892
  ອີເມວ: k_vongxay@hotmail.com

**ການສື່ສານທາງອີເມວທັງໝົດ ກະລຸນາສຳເນົາໃຫ້:**

- ກອງເລຂາຂອງຂະບວນການໂຕະມົນ
  ໂທ: +856 21 223 759-60
  ອີເມວ: rtpsecretariat@gmail.com

- ທ່ານ ພັນທະນະວົງ ພຸດທະວົງ
  ຜູ້ປະສານງານອາວຸໂສ
  ໂທ: +856 20 2223 3638
  ອີເມວ: phanthanavongp@gmail.com

- ທ່ານ ນ. ວີນາ ໂງ່ນວໍຣະຣາດ
  ພະນັກງານອາວຸໂສ ດ້ານການສື່ສານ ແລະ ສະໜັບສະໜູນດ້ານວິຊາການ ໃຫ້ແກ່ການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VIII
  ໂທ: +856 20 7786 3939
  ອີເມວ: venang@gmail.com

- ທ່ານ ປອ. ພັນທະນູສອນ ເຄນນະວົງ (ເປ່ເປ່)
  ທີ່ປຶກສາຫາດ້ານວິຊາການ (ການຮ່ວມມືເພື່ອການພັດທະນາທີ່ມີປະສິດທິພາບ, ການສ້າງແຜນລະດັບຊາດ, ເປົ້າໝາຍການພັດທະນາແບບຍືນຍົງ ໃນ ສປປ ລາວ)
  ໂທ: +856 20 5417 7675
  ອີເມວ: pepe_khennavong@hotmail.com

<u>ຈຸດປະສານງານພາຍໃນກົມຮ່ວມມືສາກົນ ທີ່ຮັບຜິດຊອບວຽກງານໜ່ວຍງານຂະແໜງການທີ່ກ່ຽວຂ້ອງ</u>

ກົມຮ່ວມມືສາກົນ ໄດ້ມອບໝາຍໃຫ້ບັນດາຄະນະພະແນກພາຍໃນກົມ ເປັນຈຸດໃຈກາງປະສານງານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ໜ່ວຍງານຂະແໜງການ ໂດຍສະເພາະ ການເຊື່ອມໂຍງວຽກງານຂະບວນການໂຕະມົນ ກັບວຽກງານໜ່ວຍງານຂະແໜງການ ເປັນຕົ້ນ ປະເດັນບັນຫາທີ່ຕິດພັນກັບເນື້ອໃນ ແລະ ຂະບວນການຈັດຕັ້ງປະຕິບັດ. ຖ້າໜ່ວຍງານຂະແໜງການມີຂໍ້ສົນໃຈ ຫຼື ຄຳຖາມ ກ່ຽວກັບການປະກອບສ່ວນຂອງໜ່ວຍງານຂະແໜງການຢູ່ໃນຂະບວນການໂຕະມົນ, ກະລຸນາຕິດຕໍ່ພົວພັນເຖິງພະນັກງານຂອງກົມຮ່ວມມືສາກົນ ດັ່ງລຸ່ມນີ້:

- **ໜ່ວຍງານເສດຖະກິດມະຫາພາກ**

  ທ່ານ ອາລຸນໄຊ ຄັດຕິຍະລາດ
  ຮອງຫົວໜ້າພະແນກປະຕິບັດປະສິດທິຜົນຂອງການຊ່ວຍເຫຼືອ
  ໂທ: +856 20 5562 6995
  ອີເມວ: alounxay@hotmail.com

- **ໜ່ວຍງານຂະແໜງການພື້ນຖານໂຄງລ່າງ**

  ທ່ານ ດວງມາລາ ຈັນທະລັງສີ
  ຫົວໜ້າພະແນກສະຖາບັນການເງິນສາກົນ
  ໂທ: +856 20 55337676
  ອີເມວ: douangmala13@gmail.com

- **ໜ່ວຍງານຂະແໜງການສາທາລະນະສຸກ**

  ທ່ານ ກູ່ທອງ ສົມມາລາ
  ຫົວໜ້າພະແນກອາຊີປາຊີຟິກ ແລະ ອາຟະລິກາ
  ໂທ: +856 20 5501 9942
  ອີເມວ: ksommala@gmail.com

- **ໜ່ວຍງານຂະແໜງການຄວບຄຸມຢາເສບຕິດ**

  ທ່ານ ມໍລະກົດ ວົງໄຊ
  ຫົວໜ້າພະແນກສະຫະປະຊາຊາດ
  ໂທ: +856 20 2244 8892
  ອີເມວ: k_vongxay@hotmail.com

- **ໜ່ວຍງານຂະແໜງການສຶກສາທິການ ແລະກິລາ**

  ທ່ານ ກູ່ທອງ ສົມມາລາ
  ຫົວໜ້າພະແນກອາຊີປາຊີຟິກ ແລະ ອາຟະລິກາ
  ໂທ: +856 20 5501 9942
  ອີເມວ: ksommala@gmail.com

- **ໜ່ວຍງານຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ**

  ທ່ານ ນ. ບາງທອງ ທິບສົມພັນ
  ຫົວໜ້າພະແນກເອີຣົບ-ອາເມຣິກາ
  ໂທ: +856 20 2223 7997
  ອີເມວ: tbangthong@gmail.com

- **ໜ່ວຍງານຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

  ທ່ານ ດວງມາລາ ຈັນທະລັງສີ
  ຫົວໜ້າພະແນກສະຖາບັນການເງິນສາກົນ
  ໂທ: +856 20 5533 7676
  ອີເມວ: douangmala13@gmail.com

- **ໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ**

  ທ່ານ ນ. ບາງທອງ ທິບສົມພັນ
  ຫົວໜ້າພະແນກເອີຣົບ-ອາເມຣິກາ Division
  ໂທ: +856 20 22237997
  ອີເມວ: tbangthong@gmail.com

- **ໜ່ວຍງານຂະແໜງການເກັບກູ້ລະເບີດບໍ່ທັນແຕກຕົກຄ້າງ ຢູ່ ສປປ ລາວ**

  ທ່ານ ມໍລະກົດ ວົງໄຊ
  ຫົວໜ້າພະແນກສະຫະປະຊາຊາດ
  ໂທ: +856 20 2244 8892
  ອີເມວ: k_vongxay@hotmail.com

- **ໜ່ວຍງານຂະແໜງການປົກຄອງ**

  ທ່ານ ມໍລະກົດ ວົງໄຊ
  ຫົວໜ້າພະແນກສະຫະປະຊາຊາດ
  ໂທ: +856 20 2244 8892
  ອີເມວ: k_vongxay@hotmail.com

## ເອກະສານຊ້ອນທ້າຍ 1 – ແບບຟອມການລາຍງານຂອງໜ່ວຍງານຂະແໜງການ

**ຊື່ຂອງໜ່ວຍງານຂະແໜງການ:**

**ປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການ:**

**ຈຸດປະສານງານຂອງກອງເລຂາໜ່ວຍງານຂະແໜງການ:**

- **ຝ່າຍລັດຖະບານ:**
- **ຝ່າຍຄູ່ຮ່ວມພັດທະນາ:**

**ພະນັກງານສະໜັບສະໜູນດ້ານວິຊາການ:**

- **ຝ່າຍລັດຖະບານ:**
- **ຝ່າຍຄູ່ຮ່ວມພັດທະນາ:**

### I. ຄວາມຄືບໜ້າໂດຍລວມທຽບໃສ່ໝາກຜົນ ແລະ ຜົນໄດ້ຮັບຂອງຂະແໜງການ

### II. ພາບລວມຂອງການປະຕິບັດວຽກງານຂອງຂະແໜງການ ໃນປີ 2017

| ວຽກຈຸດສຸມ ແລະ ກິດຈະກຳ | ຄວາມຄືບໜ້າ | ສິ່ງທ້າທາຍ (ເຫດຜົນທີ່ບໍ່ບັນລຸຕາມແຜນ) ແລະ ແຜນໃນຕໍ່ໜ້າ (ວິທີແກ້ໄຂ) |
|---|---|---|
| | | |
| **A.** ຂົງເຂດວຽກງານ (ຕົ້ນຕໍ) | | |
| 1. **ວຽກງານ/ກິດຈະກຳທີ່ຕິດພັນກັບຜົນຂອງກອງປະຊຸມໂຕະມົນລະດັບສູງ/ກອງປະຊຸມໂຕະມົນປະຈຳປີ** | | |
| 1.1 | | |
| 1.2 | | |
| | | |
| 2. **ວຽກງານ/ກິດຈະກຳອື່ນໆ ທີ່ຕິດພັນກັບດ້ານເນື້ອໃນ** | | |
| 2.1 | | |
| 2.2 | | |
| | | |
| | | |
| **B. ວຽກງານການສື່ສານ ແລະ ການເຜີຍແຜ່ ຂອງຂະແໜງການ ແລະ ກັບບັນດາໜ່ວຍງານຂະແໜງການອື່ນ** | | |
| | | |

| ວຽກຈຸດສຸມ ແລະ ກິດຈະກຳ | ຄວາມຄືບໜ້າ | ສິ່ງທ້າທາຍ (ເຫດຜົນທີ່ບໍ່ບັນລຸຕາມແຜນ) ແລະ<br>ແຜນໃນຕໍ່ໜ້າ (ວິທີແກ້ໄຂ) |
|---|---|---|
| | | |
| | | |
| C. ການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິພາບ (ອີງຕາມແຜນດຳເນີນງານຖະແຫຼງການວຽງຈັນ 2016-2025)<br>(ອະທິບາຍ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຕ່ລະຫຼັກການໃນແຜນດຳເນີນງານດັ່ງກ່າວ) | | |
| | | |
| | | |
| | | |